ກະຊວງວິທະຍາສາດແລະເຕັກໂນໂລຊີ
ຂາເຂົ້າ
ເລກທີ - 0971 ກວດ
ວັນທີ 22 MAY 2014
ເວລາ - 1450
ສົ່ງເຖິງ

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ລັດຖະບານ

ເລກທີ 167 /ລບ

ນະຄອນຫຼວງວຽງຈັນ, ວັນທີ 15-5-2014

# ດຳລັດ

## ວ່າດ້ວຍການຮັບຮອງ ແລະ ປະກາດໃຊ້ແຜນດຳເນີນງານແຫ່ງຊາດກ່ຽວກັບການ ປ້ອງກັນ ແລະ ລຶບລ້າງຄວາມຮຸນແຮງຕໍ່ແມ່ຍິງ ແລະ ເດັກ ໃນ ສປປ ລາວ 2014-2020

- ອີງຕາມກົດໝາຍວ່າດ້ວຍລັດຖະບານ ແຫ່ງ ສປປ ລາວ ສະບັບເລກທີ 02/ສພຊ, ລົງວັນທີ 6 ພຶດສະພາ 2003.
- ອີງຕາມການຕົກລົງ ຂອງກອງປະຊຸມລັດຖະບານ ສະໄໝສາມັນປະຈຳເດືອນ ມີນາ 2014, ລົງວັນທີ 20-21 ມີນາ 2014.
- ເພື່ອຈັດຕັ້ງຜັນຂະຫຍາຍແນວທາງນະໂຍບາຍຂອງພັກ-ລັດ ດ້ານການສົ່ງເສີມຄວາມກ້າວໜ້າຂອງແມ່ຍິງ ແລະ ປົກປ້ອງສິດຜົນປະໂຫຍດຂອງແມ່ຍິງ ແລະ ເດັກໃຫ້ເປັນຮູບປະທຳ.

### ລັດຖະບານ ອອກດຳລັດ

**ມາດຕາ 1.** ຮັບຮອງ ແລະ ປະກາດໃຊ້ແຜນດຳເນີນງານແຫ່ງຊາດກ່ຽວກັບການປ້ອງກັນ ແລະ ລຶບລ້າງຄວາມຮຸນແຮງຕໍ່ແມ່ຍິງ ແລະ ຄວາມຮຸນແຮງຕໍ່ເດັກ ໃນ ສປປ ລາວ 2014-2020.

**ມາດຕາ 2.** ມອບໃຫ້ຄະນະກຳມາທິການເພື່ອຄວາມກ້າວໜ້າຂອງແມ່ຍິງແຫ່ງຊາດ ແລະ ຄະນະກຳມາທິການເພື່ອແມ່ ແລະ ເດັກແຫ່ງຊາດ ເປັນຜູ້ຮັບຜິດຊອບ ພ້ອມທັງປະສານງານໂດຍກົງ ກັບຂະແໜງການກ່ຽວຂ້ອງຢູ່ຂັ້ນສູນກາງ ແລະ ທ້ອງຖິ່ນ ເພື່ອຈັດຕັ້ງປະຕິບັດ ແລະ ຜັນຂະຫຍາຍແຜນດຳເນີນງານແຫ່ງຊາດກ່ຽວກັບການປ້ອງກັນ ແລະ ລຶບລ້າງຄວາມຮຸນແຮງຕໍ່ແມ່ຍິງ ແລະ ຄວາມຮຸນແຮງຕໍ່ເດັກ ໃນ ສປປ ລາວ 2014 - 2020 ໃຫ້ມີປະສິດທິຜົນສູງ ໂດຍກຳນົດເວລາປະຕິບັດແຕ່ລະໜ້າວຽກຢ່າງລະອຽດ.

**ມາດຕາ 3.** ບັນດາກະຊວງ, ອົງການທຽບເທົ່າກະຊວງ, ອົງການທີ່ຂຶ້ນກັບລັດຖະບານ, ແນວລາວສ້າງຊາດ, ອົງການຈັດຕັ້ງມະຫາຊົນ, ນະຄອນຫຼວງວຽງຈັນ, ແຂວງ, ອົງການຈັດຕັ້ງສັງຄົມ ແລະ ທຸກພາກສ່ວນທີ່ກ່ຽວຂ້ອງ ຈົ່ງຮັບຮູ້ໃຫ້ຄວາມຮ່ວມມື ແລະ ພ້ອມກັນຈັດຕັ້ງປະຕິບັດດຳລັດສະບັບນີ້ຢ່າງເຂັ້ມງວດ ແລະ ໃຫ້ໄດ້ຮັບຜົນດີ.

**ມາດຕາ 4.** ດຳລັດສະບັບນີ້ ມີຜົນສັກສິດນັບແຕ່ມື້ລົງລາຍເຊັນເປັນຕົ້ນໄປ.

ນາຍົກລັດຖະມົນຕີ

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ນາຍົກລັດຖະມົນຕີ

ທອງສິງ ທຳມະວົງ